**ປະຊຸມແນະນຳ ໂປໂລ ເຫຼັ້ມ 1**

# ຕຳລາຂອງໂປໂລ (ຄລຕ 2:20)

**1** ອາຈານໂປໂລເດີນທາງໄປປ່າວປະກາດຂ່າວປະເສີດຫຼາຍຮອບ. ເພິ່ນຕັ້ງຄຣິດສະຕະຈັກໃນຫຼາຍປະເທດ ແລ້ວຕໍ່ໄປເພິ່ນຂຽນຈົດໝາຍໄປຕັກເຕືອນແລະໜູນໃຈຄຣິດສະຕະຈັກເຫຼົ່ານັ້ນ. ເຮົາຈະຮຽນກ່ຽວກັບຈົດໝາຍເຫຼົ່ານັ້ນທີ່ມີຢູ່ໃນພະຄຳພີໃໝ່. ຕໍ່ໄປນີ້ເຮົາຈະເລີ້ມຕົ້ນຮຽນຈາກຈົດໝາຍຂອງອາຈານໂປໂລທີ່ມີໄປເຖິງຄຣິດສະຕະຈັກໃນແຂວງຄາລາເຕຍ.
ໃຫ້ເປີດອ່ານ ຄາລາເຕຍ 2:20 ທີ່ເຫັນຕຳລາຂອງໂປໂລຈຶ່ງຈະດຳເນີນຊີວິດຢ່າງຜູ້ມີໄຊ.
ໂປໂລ ມີຊີວິດຢູ່ໂດຍຄວາມເຊື່ອໃນຜູ້ໃດ? ___________________________________

**2** ໃນ ຄລຕ 2:20 ນັ້ນ ໂປໂລກ່າວເລື່ອງ "ຊີວິດທີ່ເຮົາມີຢູ່ໃນຮ່າງກາຍ" ຊຶ່ງຮ່າງກາຍນັ້ນຮູ້ເຈັບຮູ້ການທຸກຍາກຫຼາຍປະການ. ໃຫ້ທ່ານເອົາເຈ້ຍນ້ອຍສອດໃສ່ໜ້າທີ່ມີຂໍ້ນັ້ນໃນພະຄຳພີເພື່ອຊອກຫາ ໄດ້ງ່າຍ. ແລ້ວໃຫ້ເປີດອ່ານ 2 ໂກລິນໂທ 11:23-33 ໃຫ້ທ່ານສັງເກດການຍາກລຳບາກຫຼາຍປະການ ນັ້ນ. ທ່ານເຄີຍພົບການຍາກເຊັ່ນດຽວກັນກັບໂປໂລບໍ່? __________
_________________________________________________________________

*ເຫັນວ່າອາຈານໂປໂລທົນທຸກທໍລະມານຫຼາຍປະການແທ້ ແຕ່ຍັງເຊື່ອໝັ້ນກວ່າເກົ່າອີກຊ້ຳ.*
*ເພິ່ນ ມີຕຳລາສອງປະການທີ່ເປັນມູນຖານຄື:*
*ເຮົາຈຶ່ງບໍ່ມີຊີວິດ*
*ພະຄຣິດມີຊີວິດໃນເຮົາ*
*ໃຫ້ເຮົາສຶກສາຕໍ່ໃນເລື່ອງສອງປະການນີ້!*

## ເຮົາຈຶ່ງບໍ່ມີຊີວິດ

**3** ຄຳວ່າ "ເຮົາຈຶ່ງບໍ່ມີຊີວິດ" ນັ້ນ ຕໍ່ມາຈາກຂໍ້ກ່ອນຄື ຄລຕ 2:19 ທີ່ໂປໂລບອກວ່າ "ເຮົາໄດ້ຖືກ ຄຶງໄວ້ກັບພະຄຣິດແລ້ວ". ການນີ້ໝາຍຄວາມວ່າ ໂປໂລບໍ່ເອົາໃຈຕົນເອງຕໍ່ໄປ ແຕ່ເອົາໃຈພະເຈົ້າ. ໃນເມື່ອໂປໂລຍັງເຮັດຕາມໃຈຕົນເອງ ເພິ່ນຕັ້ງໃຈວ່າຢາກເຮັດຢ່າງນີ້ແລະຢ່າງນັ້ນ. ຫຼັງຈາກການເອົາໃຈຕົນເອງຕາຍໄປແລ້ວ ໂປໂລຊອກຫາໃຫ້ໃຜເປັນຜູ້ນຳຕໍ່ໄປ? (ອ່ານ ກຈກ 22:10)
_________________________________________________________________

*ໃຫ້ອ່ານ ຢາໂກໂບ 4:13-15 ດ້ວຍ.*

ຕອບ:

**1** *ພະບຸດຂອງພະເຈົ້າ (ພະຄຣິດກໍໄດ້)*

**2** *(ບໍ່ມີຄຳຕອບທີ່ຖືກຕາຍຕົວ ໃຫ້ຍົກເລື່ອງຕ່າງ ໆ ປຶກສາຫາລືກັບໝູ່)*

**3** *ຊອກຫາໃຫ້ພະຜູ້ເປັນເຈົ້ານຳໄປ*

**4** ກ. ໃນເມື່ອກ່ອນເພິ່ນເຮັດຕາມໃຈໃຜ? (ອ່ານ ກຈກ 26:9-11) ____________________

____________________________________________________________

ຂ. ໃນເມື່ອເພິ່ນຕາຍຝ່າຍຊີວິດເກົ່າແລ້ວ ເພິ່ນກາຍເປັນຜູ້ຮັບໃຊ້ແລະເປັນພະຍານຝ່າຍໃຜ? (ກຈກ 26:16)____________________________________________________

*ຖ້າລັກສະນະເກົ່າຂອງໂປໂລບໍ່ມີແລ້ວ ລັກສະນະໃໝ່ກໍມາຢູ່ໃນຊີວິດເພິ່ນແທນ.*

## ພະຄຼິດມີຊີວິດໃນເຮົາ

**5** ກ. ແມ່ນຜູ້ໃດທີ່ມີຊີວິດໃໝ່ໃນເຮົາ? ______________________________________

ຂ. ຊີວິດໃໝ່ທີ່ເຮົາມີນັ້ນ ມີຢູ່ໃນຮ່າງກາຍຫຼືວິນຍານ? ___________________________

ຄ. ໂດຍຄວາມເຊື່ອໃນຜູ້ໃດ? __________________________________________

ງ. ໃຜສະລະຊີວິດແທນເຮົາ? __________________________________________

**6** ພະອົງທັງຮັກໂປໂລ ແລະຢູ່ໃນໂປໂລ. ເພາະເຫດນັ້ນໂປໂລສາມາດທົນທຸກທໍລະມານໃນຮ່າງກາຍ ໄດ້. ໃນໂລມ 8:35-39 ເຫັນຄວາມທຸກອີກຫຼາຍປະການທີ່ໂປໂລພົບໃນຮ່າງກາຍ.

ກ. ພວກເຮົາໃນສະໄໝນີ້ພົບການທຸກຢ່າງນັ້ນບໍ່? ____________________________

____________________________________________________________

ຂ. ປະການໃດແດ່? __________________________________________________

ຄ. ແມ່ນຫຍັງທີ່ໜູນກຳລັງໂປໂລໃນເວລາທຸກລຳບາກ? _________________________

ງ. ຜົນຮັບສຸດທ້າຍ ໂປໂລມີຫຍັງຢ່າງເຫຼືອລົ້ນ. (ຂໍ້ 37) _________________________

*ເຖິງອາຈານໂປໂລຢູ່ໃນສະພາບທີ່ຍາກທີ່ສຸດກໍຕາມ ເພິ່ນຍັງມີໄຊຊະນະໄດ້ ເພາະສອງປະການ. ໃຫ້ທ່ານທ່ອງຂຶ້ນໃຈ:*

*ເຮົາຈຶ່ງບໍ່ມີຊີວິດ*
*ພະຄຼິດມີຊີວິດໃນເຮົາ*

**7** ໃຫ້ອ່ານ ອຟຊ 4:22-24

ກ. ຂໍ້ໃດສະແດງເຖິງການບໍ່ມີຊີວິດແລ້ວ? ____________________________________

ຂ. ຂໍ້ໃດສະແດງເຖິງທີ່ພະຄຼິດມີຊີວິດໃນເຮົາ? ________________________________

ຕອບ:

***4*** *ກ. ເຮັດຕາມໃຈຕົວເອງ ຂ. ພະເຢຊູ*

***5*** *ກ. ພະຄຼິດ ຂ. ໃນຮ່າງກາຍ ຄ. ໃນພະບຸດ ງ. ພະເຢຊູ*

***6*** *ກ. (ບໍ່ມີຄຳຕອບຕາຍຕົວ) ຂ. (ບໍ່ມີຄຳຕອບຕາຍຕົວ) ຄ. ພະເຢຊູຄຼິດ ງ. ໄຊຊະນະ*

***7*** *ກ. ຂໍ້ 22 ຂ. ຂໍ້ 23-24*

**8** ຖ້າເຮົາຕາຍແກ່ຕົນເອງ ແລະມີຊີວິດໃໝ່ໃນພະເຢຊູ ມີບາງຢ່າງທີ່ຕົວຕາຍຈະບໍ່ເຮັດຕໍ່ໄປ ແລ້ວມີ ບາງຢ່າງທີ່ຊີວິດໃໝ່ຈະເລີ້ມເຮັດ. ໃຫ້ເປີດພະທຳ ເອເຟໂຊ 4:25-32 ແລ້ວແຍກເອົາສິ່ງທີ່ຈະຕ້ອງຕາຍຈາກສິ່ງທີ່ຈະມີໃໝ່. ໃຫ້ຈົດໃນຊ່ອງຫວ່າງຕໍ່ໄປ:

| ສິ່ງທີ່ຈະຕາຍ (ເລີກບໍ່ເຮັດ) | ສິ່ງທີ່ຈະມີໃໝ່ |
|---|---|
| ໃນ ຂໍ້ 25 ________________________ | ຈົ່ງ ______________________ |
| ຂໍ້ 26 ຢ່າ ___________ ຈົນຕາເວັນຕົກ | |
| ຂໍ້ 27 ຢ່າ __________ ໂອກາດໃຫ້ມານ | |
| ຂໍ້ 28 ຢ່າໄດ້ ___________ ຕໍ່ໄປ | ຈົ່ງໃຫ້ໃຊ້ມື ___________ ຫາລ້ຽງຊີບ |
| ຂໍ້ 29 ຢ່າໃຫ້ຄຳ ________ ອອກຈາກປາກ | ຈົ່ງໃຫ້ໃຊ້ _______ ຊຶ່ງເປັນປະໂຫຍດ |
| ຂໍ້ 30 ຢ່າໃຫ້ພະວິນຍານ ________ ພະໄທ | |
| ຂໍ້ 31-32 ຢ່າມີໃຈ ________________ | ຈົ່ງມີໃຈ ______________________ |
| ຢ່າມີໃຈ ________________ | ຈົ່ງມີໃຈ ______________________ |
| ຢ່າມີໃຈ ________________ | ແລະ ______________________ |

*ໃຫ້ທ່ານອ້ອນວອນ ຂໍຈາກພະເຈົ້າ ໃຫ້ດຳເນີນຊີວິດ ແບບທີ່ຕາຍແກ່ຕົນເອງ ຈຶ່ງຈະມີຊີວິດໃໝ່ໃນພະເຢຊູ ຕາມ ຄລຕ 2:20*

ຕອບ:

***8*** *...ເລີກຕົວະ... ...ກ່າວຄວາມຈິງ*

*...ຮ້າຍ...*

*...ປ່ອຍ...*

*...ລັກ... ...ອອກເຮື່ອແຮງ...*

*...ຫຍາບຊ້າ... ...ຄຳດີ...*

*...ເສຍ...*

*...ຂົມຂື່ນ... ...ເມດຕາ*

*...ໂມໂຫໂທໂສ ...ເອັນດູ*

*...ຄຽດຮ້າຍ ...ອະໄພໂທດໃຫ້ກັນ*

# ວິທີໃຊ້ບົດຮຽນການບ້ານ

## ວິທີຄົ້ນຄວ້າ

1. *ກ່ອນທີ່ທ່ານຈະຕັ້ງໃຈຮຽນການບ້ານບົດທີ 1 ພາກຕົ້ນ ໃຫ້ສັງເກດເບິ່ງວ່າ ທຸກຄຳຖາມມີຊ່ອງຫວ່າງ ທີ່ຂີດເສັ້ນ ______________. ຖ້າເຫັນຢ່າງນັ້ນ ສະແດງວ່າມີຂໍ້ຄວາມທີ່ຂາດ. ຈົ່ງປົກຄຳຕອບທີ່ຢູ່ລຸ່ມໜ້ານັ້ນກ່ອນແລ້ວໃຫ້ທ່ານ ຕື່ມຄວາມທີ່ຂາດນັ້ນ. ອາດຈະຫາຄວາມທີ່ຂາດໃນພະຄຳພີກໍໄດ້ ຫຼືອາດຈະຕ້ອງ ຊອກຫາໃນບົດຮຽນ.*
2. *ໃຫ້ຕອບຕາມລຳດັບ (1, 2, 3, ໆ ລ ໆ)*
3. *ຖ້າຕອບແລ້ວໃຫ້ເບິ່ງຄຳຕອບທີ່ຢູ່ລຸ່ມໜ້າ. ຖ້າຕອບບໍ່ຖືກໃຫ້ກວດແກ້ໃຫ້ຖືກແລ້ວ ໝາຍ X ໄວ້ຂ້າງໜ້າໃສ່ຂອບເຈ້ຍ.*

   *ສະຫລູບ: # 1 ທ່ານເອງຊອກຫາຄຳຕອບກ່ອນ.*
   *# 2 ຂຽນຄຳຕອບໃສ່ຊ່ອງຫວ່າງ*
   *# 3 ຕອບຕາມລຳດັບ*

*ໃຫ້ລົງມືຮຽນບົດ 1 ພາກຕົ້ນ.*